ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ

ຫ້ອງວ່າການແຂວງ

ເລກທີ .887... /ຫວຂ

ອຸດົມໄຊ, ວັນທີ ..7.... ກໍລະກົດ 2026

# ແຈ້ງການ

ຮຽນ: ທ່ານຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ທີ່ນັບຖື.

ເລື່ອງ: ການນໍາໃຊ້ລະບົບການສື່ສານພາກລັດ (G-Chat) ແລະ ລະບົບບໍລິຫານດີຈິຕອນ ເຂົ້າໃນການບໍລິຫານ, ບໍລິການວຽກງານຂອງລັດ.

- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງວ່າການແຂວງ ສະບັບເລກທີ 385/ຈຂ.ອຊ, ລົງວັນທີ 5 ພຶດສະພາ 2021;
- ອີງຕາມ ແຈ້ງການ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 884 /ຫສນຍ, ລົງວັນທີ 29 ມິຖຸນາ 2026;
- ອີງຕາມ ທິດຊີ້ນໍາຂອງທ່ານ ປະທານຄະນະກໍາມະການປົກຄອງແຂວງອຸດົມໄຊ ຄັ້ງວັນທີ 1 ກໍລະກົດ 2026.

ຫ້ອງວ່າການແຂວງຂໍຖືເປັນກຽດຢ່າງສູງ ແຈ້ງທິດຊີ້ນໍາຂອງທ່ານ ປະທານຄະນະກໍາມະການປົກຄອງແຂວງ ກ່ຽວກັບ ການນໍາໃຊ້ລະບົບການສື່ສານພາກລັດ (G-Chatt) ແລະ ລະບົບບໍລິຫານດີຈິຕອນ ເຂົ້າໃນການບໍລິຫານ, ບໍລິການວຽກງານຂອງລັດ ມາຍັງທ່ານຊາບດັ່ງນີ້: ມອບໃຫ້ພະແນກເຕັກໂນໂລຊີ ແລະ ການສື່ສານ ເປັນເຈົ້າການ ປະສານສົມທົບກັບຫ້ອງວ່າການແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງ ຈັດຕັ້ງຜັນຂະຫຍາຍ ແຈ້ງການ ສະບັບເລກທີ 884 ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ໃຫ້ກວ້າງຂວາງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມທິດຊີ້ນໍາຂອງຂັ້ນເທິງດ້ວຍ.

ຫົວໜ້າຫ້ອງວ່າການແຂວງ

ແຂວງອຸດົມໄຊ ຫ້ອງວ່າການ

ນ.ຈັນທະລາ ໄຊບຸນເຮືອງ

**<u>ສໍາເນົາສົ່ງ:</u>**

- ເລຂາ, ຮອງເລຂາພັກແຂວງ ທ່ານລະ 1 ສະບັບ ເພື່ອຊາບ (ໃຊ້ຕາງລາຍງານ);
- ປະທານ, ຮອງປະທານ ຄປຂ ທ່ານລະ 1 ສະບັບ ເພື່ອຊາບ (ໃຊ້ຕາງລາຍງານ);
- ຄະນະຫ້ອງວ່າການແຂວງ ທ່ານລະ 1 ສະບັບ ເພື່ອຊາບ;
- ຂະແໜງເກັບກຳ-ສັງລວມວຽກລັດ 1 ສະບັບ ເພື່ອຕິດຕາມ;
- ສໍາເນົາໄວ້ 1 ສະບັບ.

*ຫ້ອງວ່າການແຂວງ, ຂະແໜງ ເລຂາ ແລະ ເອກະສານ PSV*

สแกนด้วย CamScanner